# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 4 ເມສາ 2010 (4-4-2010)

**<u>ເມື່ອວັນຄືນພຣະຊົນກາຍເປັນວັນພັກທັມມະດາ</u>**

**<u>ຂໍ້ພຣະຄັມພີໃນບົດຮຽນນີ້:</u>** 1 ໂກຣິນໂທ 15:1-4, 12-19, 54-58

**<u>ຄຳຖາມຊີວິດ:</u>** ບົດຮຽນນີ້ຈະຊ່ອຍໃຫ້ທ່ານໄວ້ວາງໃຈໃນການຄືນພຣະຊົນຂອງອົງພຣະເຢຊູ ແລະເພື່ອຈະດຳລົງຊີວິດປະຈຳວັນໃຫ້ສົມກັບອົງພຣະເຢຊູໄດ້ຄືນພຣະຊົນ.

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ບົດຮຽນນີ້ໄດ້ເວົ້າເຖິງອົງພຣະເຢຊູໄດ້ຄືນພຣະຊົນມາອີກ ແລະພວກເຮົາສາມາດເອົາມາປະກອບໃຊ້ໃນຊີວິດ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ສຳລັບຄົນສ່ວນຫລາຍວັນຄືນພຣະຊົນຂອງອົງພຣະເຢຊູນັ້ນເປັນພຽງວັນຍຸດພັກທັມມະດາ ເພື່ອຂາຍແລະຊື້ກະຕາຍ, ເຂື່ອງໄຂ່, ແລະຕຽມຕົວເຂົ້າສູ່ຣະດູບານໃຫມ່. ບາງຄົນກໍເຖິງຍາມພາຄອບຄົວໄປພັກຜ່ອນໃນຫາດຊາຍຕ່າງໆ. ວັນຄືນພຣະຊົນນີ້ມີຫລາຍຄົນພາຄອບຄົວໄປນະມັສການໃນໂບດ. ແຕ່ວ່າເຮັດຢ່າງໃດເພື່ອໃຫ້ ວັນນີ້ເປັນວັນສຳຄັນພິເສດ? ບົດຮຽນນີ້ຈະຊີ້ນຳໃຫ້ທ່ານເຫັນຄວາມສຳຄັນແລະເປັນວັນພິເສດແລະສາມາດປ່ຽນແປງຊີວິດຂອງຄົນເຮົາໄດ້.

ມີຍິງສາວອາຍຸສິບສີ່ປີຖາມຜູ້ເປັນພໍ່ວ່າ *"ເປັນຍັງພວກເຮົາຈິ່ງພາກັນໄປໂບດ?"* ທ່ານ ແອດ ຜູ້ຮ້ອງຕົນເອງວ່າເປັນຄຣິສະຕຽນບໍ່ສາມາດຕອບຄຳຖາມຂອງລູກໄດ້ເພາະລາວບໍ່ຄ່ອຍໄປໂບດ. ທ່ານ ແອດ ເລີຍຕອບວ່າ *"ເຊີລີເອີຍ, ວັນຄືນພຣະຊົນແມ່ນວັນອົງພຣະເຢຊູຄືນມາຈາກຕາຍ ຈຳໄດ້ບໍ່ພວກເຮົາພາກັນໄປໂບດໃນຍາມຄຣິດສະມາດ."* ແປວ່າທ່ານ ແອດພາຄອບຄົວໄປໂບດໃນງານສຳຄັນເທົ່ານັ້ນ.

ທ່ານເດ້ ຈະອະທິບາຍຕໍ່ນາງເຊີລີເຖິງຄວາມສຳຄັນຂອງວັນຄືນພຣະຊົນຢ່າງໃດ? ທ່ານເຄີຍຮູ້ໃຜບໍ່ທີ່ເປັນເໝືອນທ່ານ ແອດ? ຖ້າທ່ານເປັນຄຣິສະຕຽນໃຫ້ທ່ານສຶກສາເຖິງຄວາມສຳຄັນຂອງວັນຄືນພຣະຊົນເພາະມັນສາມາດປ່ຽນແປງຊີວິດຂອງຄົນໄດ້. ຖ້າທ່ານຍັງບໍ່ໄດ້ເປັນຄຣິສະຕຽນ ບົດຮຽນນີ້ກໍຈະສອນທ່ານໃຫ້ເຂົ້າໃຈເຖິງຄວາມຈຳເປັນໃນການຕັດສິນໃຈຮັບເອົາອົງພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ພົ້ນເພາະບໍ່ມີຜູ້ໃດໄດ້ຮັບ**ໄຊ**ຊະນະຕໍ່ຄວາມຕາຍເໝືອນພຣະເຢຊູ.

### 1. <u>ຈົ່ງຮູ້ຈັກວ່າທ່ານເຊື່ອຢ່າງໃດ</u>: (1 ກຣທ 15:1-4)

ການຄືນມາຈາກຕາຍຂອງອົງພຣະເຢຊູເປັນສິ່ງສຳຄັນຍິ່ງໃນຄວາມເຊື່ອຂອງຊາວຄຣິສະຕຽນ. ອາຈານໂປໂລໄດ້ພົບກັບອົງພຣະເຢຊູຜູ້ຄືນມາຈາກຕາຍໃນຫົນທາງໄປເມືອງດາມາເຊ (ກຈກ 9:1-9). ອາຈານໂປໂລອາດໄດ້ຍິນຄົນອື່ນເວົ້າໃຫ້ຟັງເຖິງການທີ່ອົງພຣະເຢຊູຄືນພຣະຊົນ. ແຕ່ອາຈານໂປໂລໄດ້ຮັບຮູ້ການຄືນພຣະຊົນແລະກໍປະກາດຕໍ່ຄົນອື່ນ. ຄຣິສະຕຽນໃນເມືອງໂກຣິນໂທ ໄດ້ຮັບຮູ້ວ່າອົງພຣະເຢຊູໄດ້ຄືນມາແທ້ ນັ້ນ**ເປັນຄວາມເຊື່ອຂອງພວກເຂົາ**

**ເຫດການອົງພຣະເຢຊູຄືນມາຈາກຕາຍມີຢູ່ດັ່ງນີ້:**

- ອູບໂມງຫວ້າງເປົ່າ (ມທ 28:1-10
- ປາກົດຕົວຕໍ່ນາງມາຣີອາ ມັກດາລາ (ໂຢຮັນ 20:11-18)
- ປາກົດຕົວຕໍ່ສາວົກສອງຄົນທີ່ທາງໄປເອມາອູດ (ລູກາ 24:13-32)
- ປາກົດຕົວຕໍ່ເປໂຕໃນກຸງເຢຣູຊາເລັມ (ລູກາ 24:34)
- ປາກົດຕົວຕໍ່ພວກສາວົກ 10 ຄົນໃນຫ້ອງຊັ້ນເທິງ (ໂຢຮັນ 20:19-23)
- ປາກົດຕົວຕໍ່ພວກສາວົກ 11 ຄົນໃນຫ້ອງຊັ້ນເທິງ (ໂຢຮັນ 20:26-31)
- ປາກົດຕົວຕໍ່ພວກສາວົກ 7 ຄົນ ທີ່ທະເລຄາລີເລ (ໂຢຮັນ 21:1-23)
- ປາກົດຕົວຕໍ່ພວກສາວົກ 11 ຄົນ (ມທ 28:16-20)
- ປາກົດຕົວຕໍ່ຄົນຫລາຍກວ່າ 500 ຄົນ (1 ກຣທ 15:6)
- ປາກົດຕົວຕໍ່ຢາໂກໂບ (ນ້ອງຊາຍພຣະເຢຊູຄົນລະພໍ່) (1 ກຣທ 15:7)
- ປາກົດຕົວຕໍ່ພວກສາວົກ 11 ຄົນ ເວລາສະເດັດກັບຄືນສູ່ສວັນ (ກຈກ 1:3-8)

ອາຈານໂປໂລກ່າວຕໍ່ໄປອີກວ່າ. ອົງພຣະຄຣິດໄດ້ຕາຍແທນຄວາມບາບຂອງພວກເຮົາ, ແຕ່ຖ້າພຣະອົງບໍ່ໄດ້ຄືນມາຈາກຕາຍ ພຣະເຢຊູກໍເປັນເໝືອນຄົນອື່ນໆຕາຍໄປແລ້ວກໍຕາຍໄປເລີຍ ເປັນຄົນໝົດບຸນ.

ຄົນດີສາມາດຍອມເສັຽສະລະເພື່ອຄົນອື່ນສເມີ. ແຕ່ການຕາຍຂອງອົງພຣະເຢຊູເທົ່ານັ້ນ ສາມາດປະທານຄວາມພົ້ນໃຫ້ທຸກໆຄົນຜູ້ເຊື່ອໃນພຣະອົງ. ມີຫລາຍສາສນາແລະຄຳສອນອື່ນອ້າງວ່າເຂົາໄດ້ຮັບຄວາມພົ້ນຈາກຄວາມທຸກເວດທະນາໄດ້, ແຕ່ອົງພຣະເຢຊູ ເປັນພຣະເຈົ້າອົງແທ້ຈິງປະທານຄວາມລອດພົ້ນໃຫ້ແກ່ມະນຸດ (ໂຢຮັນ 14:6). ອາຈານໂປໂລເນັ້ນວ່າການຕາຍແລະການຄືນພຣະຊົນຂອງອົງພຣະເຢຊູນັ້ນໄດ້ເຮັດໃຫ້ຄຳທຳນວາຍໃນພຣະຄັມພີເດີມສຳເຣັດຖືກຕ້ອງ.

## 2. <u>ໃຫ້ວາດພາບເບິ່ງເຖິງຄວາມເຊື່ອປາສຈາກການຄືນພຣະຊົນ</u> (1 ກຣທ 15:12-19)

ການຄືນພຣະຊົນຂອງອົງພຣະເຢຊູເປັນຄວາມເຊື່ອທີ່ສຳຄັນທີ່ສຸດຂອງຄຣິສະຕຽນ. ຖ້າວ່າປາສຈາກສິ່ງນີ້ແລ້ວຈະເປັນຢ່າງໃດ? ມີບາງຄົນໃນເມືອງໂກຣິນໂທ ກ່າວວ່າການ**ຄືນມາຈາກຕາຍ**ນັ້ນເປັນສິ່ງທີ່ເປັນໄປບໍ່ໄດ້ ແລະໃນທຸກວັນນີ້ພວກບໍ່ເຊື່ອກໍອາດເວົ້າເໝືອນກັນ. ໃນສມັຍຂອງອາຈານໂປໂລມີພວກຢິວແລະພວກຊາດູກາຍປະຕິເສດການຄືນມາຈາກຕາຍໃນດ້ານຮ່າງກາຍ (ກຈກ 23:8). ບາງຄົນເຊື່ອວ່າຮ່າງກາຍຖືກແຍກອອກຈາກຊີວິດ ແຕ່ບາງຄົນເຊື່ອວ່າບໍ່ມີຊີວິດຫລັງຈາກຕາຍ. ແຕ່ຢ່າງໃດກໍຕາມ ຖ້າບໍ່ມີການຄືນມາຈາກຕາຍແລ້ວ ອົງພຣະເຢຊູກໍບໍ່ສາມາດຄືນມາຈາກຕາຍໄດ້.

ອາຈານໂປໂລຮູ້ແນ່ວ່າອົງພຣະເຢຊູຍັງຊົງພຣະຊົນຢູ່ ເພາະເພິ່ນໄດ້ພົບກັບພຣະເຢຊູຜູ້ຄືນມາຈາກຕາຍນັ້ນ (1 ກຣທ 15:8) ແລະເພິ່ນເຫັນວ່າຍັງມີຫລາຍໆຄົນໄດ້ເຫັນແລະເປັນພະຍານວ່າອົງພຣະເຢຊູໄດ້ຄືນມາຈາກຄວາມຕາຍແທ້ (15:5-8). ແລະປຶ້ມຂ່າວປະເສີດໄດ້ສອນວ່າອຸມໂມງທີ່ເກັບສົບພຣະເຢຊູນັ້ນຫວ້າງເປົ່າ.

ຖ້າອົງພຣະເຢຊູບໍ່ໄດ້ຄືນມາຈາກຄວາມຕາຍ, ຄຳສອນຂອງໂປໂລ ແລະຄວາມເຊື່ອຂອງພວກຄຣິສະຕຽນກໍບໍ່ມີຮາກຖານຫຍັງ. ຄຳເວົ້າວ່າບໍ່ມີຮາກຖານນັ້ນອາດແປອີກໄດ້ວ່າ "ເປົ່າດາຍ" ຫລື "ໃຊ້ບໍ່ໄດ້" ຖ້າປາສຈາກການຄືນພຣະຊົນຂອງອົງພຣະເຢຊູແລ້ວ ການເທສນາກໍບໍ່ເປັນຄວາມຈິງ! ແລະພວກເຮົາຜູ້ທີ່ເຊື່ອກໍຍັງເປັນຄົນບາບເໝືອນເດີມ.

ແມ່ນແລ້ວການຕາຍແລະຄືນມາຈາກຕາຍຂອງອົງພຣະເຢຊູເປັນພື້ນຖານຂອງຫລັກຄວາມເຊື່ອຂອງພວກເຮົາ. ຖ້າປາສຈາກການຄືນພຣະຊົນແລ້ວການຕາຍຂອງພຣະເຢຊູກໍເປັນພຽງການຕາຍທັມມະດາເໝືອນຄົນທັງປວງ ແລະພຣະ

ເຢຊູກໍບໍ່ແມ່ນພຣະເຈົ້າແລະພຣະຜູ້ຊ່ວຍຂອງພວກເຮົາ ພວກເຮົາກໍຢູ່ໃນ**ຄວາມຕາຍ**ເໝືອນເດີມ ບໍ່ມີຄວາມຫວັງ ແລະເປັນຄົນໜ້າ**ສົງສານທີ່ສຸດ.** ການຄືນພຣະຊົນຂອງພຣະເຢຊູເປັນສິ່ງພິເສດທີ່ພຣະບິດາໄດ້ມີແຜນການເອົາໄວ້ (ໂຣມ 1:4).

ໃນໂອກາດວັນຄືນພຣະຊົນ ມີຂ່າວລາຍງານຈາກສະຖານີຫລາຍໆແຫ່ງ ພວກນັກຂ່າວໄປສັມພາດຜູ້ບໍ່ເຊື່ອໃນອົງພຣະເຢຊູ ພວກນີ້ປະຕິເສດການຄືນມາຈາກຕາຍຂອງອົງພຣະເຢຊູ. ພວກເຂົາຍັງກ່າວອີກວ່າອົງພຣະເຢຊູບໍ່ໄດ້ຕາຍທີ່ໄມ້ກາງແຂນ ດັ່ງນັ້ນຈຶ່ງບໍ່ມີການຄືນມາຈາກຕາຍ. ພວກສາວົກມີແຕ່ຝັນໄປເທົ່ານັ້ນວ່າເຂົາໄດ້ເຫັນອົງພຣະເຢຊູຄືນມາແທ້. ໃຫ້ພວກເຮົາພາກັນຕອບຜູ້ບໍ່ເຊື່ອນັ້ນວ່າອົງພຣະເຢຊູຜູ້ທີ່ເຮົາເຊື່ອແລະນັບຖືໄດ້ຄືນມາຈາກຕາຍ ເພາະຄວາມຕາຍນັ້ນບໍ່ມີອຳນາດເໜືອພຣະອົງໄດ້. ມີຫລາຍຄົນໄດ້ເຫັນອຸບໂມງເປົ່າ ແລະພຣະອົງໄດ້ສະເດັດຂຶ້ນໄປເມືອງຟ້າສວັນແທ້.

**ບໍ່ມີຄ່າອັນໃດ**

ໃນພາສາກຣີກແປຄຳເວົ້າ "ບໍ່ມີຄ່າອັນໃດ" ໄດ້ມີຢູ່ຫ້າເທື່ອໃນພຣະຄັມພີໃໝ່. ອາຈານໂປໂລໃຊ້ໃນປຶ້ມກິຈການ 14:15 ເຖິງການນັບຖືພຣະທຽມໃນເມືອງລີສຕຣາ.ໃນ 1 ກຣທ 3:20 ໂປໂລໃຊ້ຄຳເວົ້າ ນີ້ເຖິງຄວາມໂງ່ຂອງຜູ້ບໍ່ເຊື່ອ ແຕ່ຄິດວ່າຕົນເອງສລາດດີ. ໃນປຶ້ມ ຕີໂຕ 3:9 ໃຊ້ໃນການຖົກຖຽງກັນຢ່າງໄຮ້ປໂຍດ. ຢາໂກໂບໃຊ້ຄຳເວົ້ານີ້ເຖິງການເຊື່ອສາສນາບໍ່ມີຄ່າປາສນາການລົງມືໃດໆ (1:26). ເປໂຕ ໃຊ້ຄຳເວົ້ານີ້ໝາຍເຖິງຊີວິດບໍ່ມີຄວາມໝາຍອັນໃດຖ້າປາສນາອົງພຣະຄຣິດ. ( 1 ເປໂຕ 1:18). ໂປໂລໃຊ້ຄຳເວົ້ານີ້ອີກໃນ 1 ໂກຣິນໂທ 15:17 ຖ້າວ່າພຣະຄຣິດບໍ່ໄດ້ຊົງຖືກບັນດານໃຫ້ຄືນພຣະຊົນ ຄວາມເຊື່ອຂອງເຈົ້າກໍໄຮ້ປໂຍດ.

ການເຊື່ອວ່າອົງພຣະເຢຊູໄດ້ຄືນພຣະຊົນມາແທ້ເປັນຜົນສະທ້ອນໃນຊີວິດຂອງຄຣິສະຕຽນໃນທຸກວັນນີ້. ເຊື່ອຢ່າງນີ້ໄດ້ຫຍັງໃນຊີວິດ? ສິ່ງນີ້ກໍຊ່ວຍໃຫ້ຮູ້ຢ່າງໝັ້ນໃຈວ່າອົງພຣະເຢຊູໄດ້ຕາຍເພື່ອຄວາມຜິດບາບຂອງຕົນເອງ. ແຕ່ເມື່ອອົງພຣະເຢຊູບໍ່ໄດ້ຄືນພຣະຊົນມາອີກກໍເຫັນວ່າຕົນເອງຍັງຕົກຢູ່ໃນຄວາມຜິດບາບເໝືອນເດີມ. ຂ້າພະເຈົ້າອາດພະຍາຍາມຊ່ວຍຕົນເອງຈາກບັນຫາ ແຕ່ກໍເຫັນວ່າໝົດທາງ ອົງພຣະເຢຊູເທົ່ານັ້ນທີ່ຊ່ວຍໄດ້ ເພາະພຣະອົງໄດ້ຄືນມາຈາກຄວາມຕາຍແລ້ວ ພຣະອົງມີອຳນາດເໜືອຄວາມຕາຍ ແລະມີຊັຍຊະນະຕໍ່ບັນຫາຫລາຍຢ່າງໃນຊີວິດ.

## 3. <u>**ຕ້ອງດຳເນີນຊີວິດໃຫ້ສົມກັບອົງພຣະເຢຊູຄືນພຣະຊົນ**</u> (1 ກຣທ 15:54-58)

ການຄືນມາຈາກຕາຍຂອງອົງພຣະເຢຊູນັ້ນເປັນສາຍໄຍເຖິງອະນາຄົດວ່າຜູ້ທີ່ເຊື່ອຈະມີພລັງ ແລະຄວາມຫວັງແທ້. ອົງພຣະເຢຊູຄືນມາຈາກຕາຍແມ່ນ "ຜົນແຮກໃນພວກຄົນທີ່ລ່ວງລັບໄປແລ້ວນັ້ນ" (15:20-23) ຊາວຄຣິສະຕຽນກໍຍັງປະສົບກັບຄວາມຕາຍດ້ານຮ່າງກາຍຈົນເຖິງວັນພຣະເຢຊູສະເດັດກັບມາຄັ້ງທີສອງ. ອາຈານໂປໂລຍັງເວົ້າຊ້ຳອີກວ່າວັນນັ້ນຄຣິສະຕຽນຈະຄືນມາເໝືອນອົງພຣະເຢຊູ. ການຕາຍດ້ານຮ່າງກາຍນັ້ນເປັນສັດຕຣູສຸດທ້າຍ (15:26) ອ້າງຈາກພຣະຄັມພີເດີມ ເອຊາຢາ 25:8 ແລະໂຮເຊຢາ 13:14, ນັ້ນເວົ້າເຖິງຄວາມຊັຍຊະນະຈາກຄວາມຕາຍດ້ານຮ່າງກາຍ.

ການຄືນມາຈາກຕາຍຂອງອົງພຣະເຢຊູນັ້ນສຳຄັນຫລາຍຕໍ່ຄຣິສະຕຽນ. ຖ້າການຄືນມານັ້ນບໍ່ເກີດຂຶ້ນແມ່ນຫຍັງຈະເກີດຂຶ້ນ?

ຫລາຍຄົນເຂົ້າໃຈວ່າການຕາຍນັ້ນເປັນສັດຕຣູ. ການຕາຍນັ້ນໄດ້ທຳລາຍຮ່າງກາຍ ແລະແຍກພວກເຮົາອອກຈາກ

ຍາດຕິພີ່ນ້ອງ. ແຕ່ເມື່ອພວກເຮົາມີຄວາມເຈັບຊໍາເຮື້ອ ພວກເຮົາອາດຄິດວ່າຄວາມຕາຍເປັນຂອງດີ ກາຍເປັນເພື່ອນໄດ້ ແລະພວກເຮົາຍິນດີຍອມຕາຍ (ຟີລິບປອຍ 1:21-24). ຕາມປົກກະຕິແລ້ວ ການຕາຍນີ້ເປັນຜົນສະທ້ອນຈາກຄວາມຜິດບາບ. ຄວາມບາບແມ່ນການເຮັດຜິດຕໍ່**ຄໍາສັ່ງຂອງພຣະເຈົ້າ.**

ການທີ່ອົງພຣະເຢຊູໄດ້ຄືນມາຈາກຕາຍນັ້ນເຮັດໃຫ້ພວກເຮົາບໍ່ຢ້ານຕໍ່ຄວາມຕາຍ. ຄຣິສະຕຽນມີຄວາມຍິນດີໃນການຕາຍເພາະວັນນຶ່ງພວກເຮົາຈະຄືນມາເໝືອນອົງພຣະເຢຊູ. ພວກເຮົາສັຣເສີນພຣະເຈົ້າທີ່ພຣະອົງໄດ້ເຮັດໃຫ້ອົງພຣະເຢຊູຄືນພຣະຊົນ.

ມີຄຣິສະຕຽນຫລາຍຄົນເປັນຫ່ວງແລະຢາກເຂົ້າໃຈເຖິງຮ່າງກາຍເວລາຄືນມາຈາກຕາຍ. ແຕ່ອາຈານໂປໂລສອນວ່າສິ່ງນັ້ນເປັນ "ສິ່ງເລິກລັບ" (15:15). ເພິ່ນອະທິບາຍວ່າເວລານັ້ນຮ່າງກາຍຂອງພວກເຮົາໄດ້ຖືກປ່ຽນສະພາບ ເມື່ອຕອນນັ້ນມາເຖິງ (15:35-49). ແນ່ນອນພວກເຮົາຈະໄດ້ມີຮ່າງກາຍໃໝ່ໃນເວລານັ້ນ.

> ຄຣິສຕຽນຄວນເຮັດຫຍັງເວລາກໍາລັງລໍຖ້າຕາຍ ຫລືການສະເດັດກັບຄືນມາຂອງອົງພຣະເຢຊູ? ອາຈານໂປໂລສອນວ່າໃຫ້ພວກເຮົາເອົາໃຈໃສ່ໃນວຽກງານຂອງອົງພຣະຜູ້ເປັນເຈົ້າ. ພວກເຮົາຄວນເປັນຕົວຢ່າງ ເປັນພະຍານຕໍ່ໝູ່ເພື່ອນ ແລະມີຊີວິດຢູ່ດ້ວຍການເຊື່ອຟັງ. ພວກເຮົາບໍ່ຄວນຖິ້ມພຣະເຈົ້າໃນເມື່ອພົບກັບບັນຫານາໆປະການ. ພວກເຮົາຄວນເອົາໃຈໃສ່ໃນພາຣະກິດໃນຄຣິສຕະຈັກຂອງເຮົາ. ໃຫ້ຮູ້ວ່າງານທີ່ເຮົາທໍານັ້ນບໍ່ເປັນການໄຮ້ປໂຍດ ເພາະພວກເຮົາຮັບໃຊ້ພຣະເຈົ້າອົງຄືນພຣະຊົນຈາກຄວາມຕາຍ.

## ບົດຮຽນໃນຊີວິດ

ບົດຮຽນນີ້ໄດ້ສອນພວກເຮົາວ່າວັນຄືນພຣະຊົນນັ້ນບໍ່ແມ່ນພຽງວັນພັກເທົ່ານັ້ນ! ສໍາລັບຄຣິສະຕຽນແລ້ວເປັນວັນສລອງວັນຄືນພຣະຊົນຂອງອົງພຣະເຢຊູ. ຖ້າອົງພຣະເຢຊູບໍ່ໄດ້ຄືນມາຈາກຄວາມຕາຍແລ້ວພວກເຮົາກໍຍັງຢູ່ໃນຄວາມບາບ ຄວາມເຊື່ອຂອງພວກເຮົາກໍໄຮ້ປໂຍດ ຄໍາເທສນາກໍບໍ່ມີຄ່າອັນໃດ. ແຕ່ຍ້ອນອົງພຣະເຢຊູເຈົ້າໄດ້ຄືນພຣະຊົນນີ້ ພວກເຮົາຜູ້ທີ່ເຊື່ອຈຶ່ງມີຊັຍຊະນະອັນໃຫຍ່ຫລວງຕໍ່ຄວາມຕາຍດ້ານຮ່າງກາຍນີ້.

ທ່ານຈະເອົາບົດຮຽນນີ້ມາໃຊ້ໃນຊີວິດຂອງທ່ານໄດ້ຢ່າງໃດ?

- ໃຫ້ຮູ້ຈັກດີເຖິງປວັດເຣື່ອງຕາຍແລະການຄືນມາຈາກຕາຍຂອງພຣະເຢຊູ. ຕຽມພ້ອມທີ່ຈະແບ່ງປັນກັບຄົນອື່ນໆເຖິງຄວາມໝາຍອັນແທ້ຈິງຂອງວັນຄືນພຣະຊົນ.
- ມີຫຍັງແດ່ດີເກີດຂຶ້ນຊຶ່ງເປັນຜົນຂອງການຄືນພຣະຊົນຂອງອົງພຣະເຢຊູ?
- ທ່ານຈະເວົ້າກັບເພື່ອນຮ່ວມງານຜູ້ເວົ້າວ່າວັນຄືນພຣະຊົນຂອງອົງພຣະເຢຊູເປັນພຽງນິທານເທົ່ານັ້ນຢ່າງໃດ?
- ສໍາຣວດເຖິງຄວາມເຊື່ອຂອງທ່ານໃນວັນສຸດທ້າຍເວລາຕາຍ. ການຕາຍແລະການຄືນມາຈາກຕາຍຂອງອົງພຣະເຢຊູເຮັດໃຫ້ການຕາຍຂອງທ່ານເປັນຢ່າງໃດ?
- ໃຫ້ບອກຢ່າງນ້ອຍອັນນຶ່ງວ່າທ່ານຈະແບ່ງປັນຄວາມຫວັງຂອງຄຣິສະຕຽນກັບຄົນຜູ້ບໍ່ຮູ້ຈັກພຣະຄຣິດໃນເມື່ອພວກເຂົາມີຄວາມໂສກເສົ້າເພາະຄົນທີ່ເຂົາຮັກໄດ້ຕາຍຈາກໄປ ຢ່າງໃດ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.